ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ນະຄອນຫຼວງວຽງຈັນ
ພະແນກໂຍທາທິການ ແລະ ຂົນສົ່ງ

ເລກທີ: 10911 /ຍທຂ.ນວ
ວັນທີ: 29 OCT 2024

ສໍານັກງານຂໍ້ມູນການປົກຄອງ ນວ
ໜ່ວຍງານບໍລິການປະຕູດຽວ
ຂາເຂົ້າ
ເລກທີ: 4949
ວັນທີ: 30.10.24

# ໜັງສືສະເໜີ

**ຮຽນ: ທ່ານ ເຈົ້າຄອງນະຄອນຫຼວງວຽງຈັນ ທີ່ເຄົາລົບ ແລະ ນັບຖືຢ່າງສູງ.**

**ເລື່ອງ: ສະເໜີ ຮັບຮອງແນວຄວາມຄິດການກໍ່ສ້າງຊ່ອງຈະລາຈອນ ຊ່ວຍ (auxiliary lane) ໃນເຂດສະຖານີໃຫຍ່ (Transit Mall) ຢູ່ຖະໜົນເສດຖາທິຣາດ ໂຄງການຂົນສົ່ງແບບຍືນຍົງໃນຕົວເມືອງ ນະຄອນຫຼວງວຽງຈັນ.**

- ອີງຕາມ ຂໍ້ຕົກລົງ ຂອງທ່ານເຈົ້າຄອງນະຄອນຫຼວງວຽງຈັນ ວ່າດ້ວຍການຈັດຕັ້ງ ແລະ ການເຄື່ອນໄຫວຂອງພະແນກໂຍທາທິການ ແລະ ຂົນສົ່ງ ນະຄອນຫຼວງວຽງຈັນ ສະບັບເລກທີ 444/ຈນວ, 07 ເມສາ 2023;
- ອີງຕາມ ການທິດຊີ້ນໍາ ຂອງທ່ານນາຍົກລັດຖະມົນຕີ ຄັ້ງວັນທີ 19 ກໍລະກົດ 2024;
- ອີງຕາມ ໜັງສືລາຍງານ ຂອງທີ່ປຶກສາຈັດຕັ້ງປະຕິບັດໂຄງການ ສະບັບເລກທີ PM/TL 071-25-10-2024 ລົງວັນທີ 25 ຕຸລາ 2024;
- ອີງຕາມ ໜັງສືສະເໜີ ຂອໂຄງການຂົນສົ່ງແບບຍືນຍົງໃນຕົວເມືອງ ນະຄອນຫຼວງວຽງຈັນ ສະບັບເລກທີ 334/ຍທຂ.ຄຂຍຕ, ລົງວັນທີ 28 ຕຸລາ 2024.

ພະແນກໂຍທາທິການ ແລະ ຂົນສົ່ງ ນະຄອນຫຼວງວຽງຈັນ ຂໍຖືເປັນກຽດຮຽນສະເໜີມາຍັງທ່ານຊາບວ່າ: ພາຍຫຼັງໄດ້ຮັບທິດຊີ້ນໍາຂອງ ທ່ານນາຍົກລັດຖະມົນຕີ ໃນໂອກາດລົງຕິດຕາມ ແລະ ຊີ້ນໍາໂຄງການ ຄັ້ງວັນທີ 19 ກໍລະກົດ 2024 ຜ່ານມາ, ຊ່ຽວຊານໂຄງການ ໄດ້ອອກແບບແນວຄວາມຄິດການກໍ່ສ້າງຊ່ອງຈະລາຈອນ (ເລນ) ຊ່ວຍ (auxiliary lane) ໃນເຂດສະຖານີໃຫຍ່ (Transit Mall) ຢູ່ຖະໜົນເສດຖາທິຣາດ ແນໃສ່ອໍານວຍຄວາມສະດວກແກ່ປະຊາຊົນ ແລະ ຊາວຄ້າຂາຍ ທີ່ດໍາລົງຊີວິດຢູ່ເຂດນີ້. ລາຍລະອຽດມີດັ່ງລຸ່ມນີ້:

I. ອົງປະກອບເສັ້ນທາງ ພາຍຫຼັງກໍ່ສ້າງເລນຊ່ວຍ (auxiliary lane)

ເສັ້ນທາງ ຈະປະກອບດ້ວຍ ເລນລົດເມ BRT, ສະຖານີ ຂຶ້ນ-ລົງ ລົດເມ BRT (ແຄມທາງ), ***ເລນຊ່ວຍ***, ທາງຍ່າງ, ໄຟຈະລາຈອນ, ຕົ້ນໄມ້, ປ້າຍ ແລະ ເຄື່ອງໝາຍຈະລາຈອນ.

1. ເລນລົດເມ BRT ໂດຍທົ່ວໄປກວ້າງ 3,50 ແມັດ. ຈຸດແຄບສຸດ 3,00 ແມັດ ຢູ່ ກມ 1+580 ຫາ 1+640;
2. **ເລນຊ່ວຍ** ກວ້າງ 3,00 ແມັດ ຂຶ້ນໄປ;
3. ທາງຍ່າງ (2 ຟາກທາງ) ກວ້າງ 1 – 4 ແມັດ.

II. ຈຸດປະສົງ ແລະ ມາດຕະການນໍາໃຊ້ເລນຊ່ວຍ (auxiliary lane)

1. ຊ່ວຍລະບາຍການສັນຈອນ ສໍາລັບລົດເບົາ ແລະ ລົດຂົນສົ່ງ ຂະໜາດນ້ອຍ;
2. ອໍານວຍຄວາມສະດວກ ໃຫ້ການເຂົ້າ-ອອກ ທີ່ຢູ່ອາໄສ, ສໍານັກງານ, ແຫຼ່ງບໍລິການ, ບ່ອນຈອດລົດ;
3. **ເລນຊ່ວຍ** (auxiliary lane) ຍັງສາມາດໝູນໃຊ້ສໍາລັບ ຄົນຍ່າງ, ລົດຖີບ, ສະກູດເຕີ ແລະ ອື່ນໆ;

4. ສ້າງລະບຽບຄຸ້ມຄອງສະເພາະເຊັ່ນ: ການກຳນົດຄວາມໄວ, ປະເພດຍານພາຫະນະ, ກຳນົດເວລາເຂົ້າ-ອອກ ຕາມກາລະໂອກາດຕ່າງໆ ເຊັ່ນ: ວັນພັກລັດຖະການ ຫຼື ເວລາເລັ່ງດ່ວນ (ເຊົ້າ-ຄ່ຳ) ເພື່ອການກຳນົດຄວາມໄວ ແລະ ປະເພດພາຫະນະ ຜ່ານເສັ້ນທາງນີ້.
5. ການກໍ່ສ້າງ **ເລນຊ່ອຍ** ຈະບໍ່ປ່ຽນແປງແນວຄວາມຄິດຂອງໂຄງການ, ບໍ່ຂັດແຍ້ງກັບແຜນການຄຸ້ມຄອງການສັນຈອນ ແລະ ແຜນປະຕິບັດງານລົດເມດ່ວນ BRT.

ເພື່ອເປັນບ່ອນອີງໃຫ້ໂຄງການ ສືບຕໍ່ອອກແບບລະອຽດ (ແບບກໍ່ສ້າງ). ດັ່ງນັ້ນ, ຈຶ່ງສະເໜີມາຍັງທ່ານເຈົ້າຄອງນະຄອນຫຼວງວຽງຈັນ ພິຈາລະນາອະນຸມັດ ຕາມທາງຄວນດ້ວຍ.

(ລາຍລະອຽດອື່ນໆມີເອກະສານຊ້ອນທ້າຍມາພ້ອມນີ້).

**ຫົວໜ້າພະແນກ**

ບຸນຍະວັດ ນີຣະໄຊຍ໌